ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສທຄ-ທພລ ສຳມະນາດ້ານວິຊາການ






ຄະນະກຳມະການຮາກຖານສະຖາບັນການທະນາຄານ (ສທຄ) ແລະ ທະນາຄານພັດທະນາລາວ (ທພລ) ໄດ້ຈັດປະຊຸມສຳມະນາດ້ານວິຊາການທີ່ເປັນນິມິດໝາຍທີ່ດີລະຫວ່າງສະຖາບັນການສຶກສາທີ່ເປັນຜູ້ສ້າງ ແລະ ທະນາຄານເປັນຜູ້ນຳໃຊ້ຊັບພະຍາກອນມະນຸດໃຫ້ເກີດປະໂຫຍດໃນຕະຫຼາດເງິນ-ຕະຫຼາດທຶນ ແລະ ຂົງເຂດເສດຖະກິດ ຊຶ່ງຈັດຂຶ້ນໃນວັນທີ 3 ມິຖຸນາ 2020 ທີ່ສະໂມສອນ ສທຄ ໂດຍການເປັນປະທານຮ່ວມຂອງສະຫາຍ ວິໄລຄຳ ປ້ອງພິມຄຳ ປະທານຄະນະກຳມະການຮາກຖານ ສທຄ ແລະ ສະຫາຍ ສູນທອນ ສິນທະປະເສີດ ປະທານຄະນະກຳມະການຮາກຖານ ທພລ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສັນຕິ ພົນເມືອງລາວ ເລຂາຄະນະພັກຮາກຖານ-ຫົວໜ້າ ສທຄ; ມີບັນດາສະມາຊິກກຳມະການຈາກ 2 ພາກສ່ວນ ແລະ ຕາງໜ້າຄະນະກຳມະການຮາກຖານທະນາຄານແຫ່ງ ສປປ ລາວ (ທຫລ) ເຂົ້າຮ່ວມ.

ນັກວິທະຍາກອນຈາກ ສທຄ ໄດ້ນຳສະເໜີ ສທຄ 2020 ແລະ ອະນາຄົດ ໂດຍສະເພາະການສຶກສາໃນຍຸກ 4.0 ໃນການຮຽນ-ການສອນທີ່ປ່ຽນໄປ ຊຶ່ງຄວາມຄິດພື້ນຖານບາງຢ່າງໃນສັງຄົມ ໄດ້ປ່ຽນໄປຕາມກົດເກນການຂະຫຍາຍຕົວ ຊຶ່ງປັດຈຸບັນນີ້ບັນດາປະເທດທີ່ພັດທະນາແລ້ວໄດ້ນຳໃຊ້ Facebook, Google, Alibaba…ແລະ ອື່ນໆ ໃຫ້ກາຍເປັນຫ້ອງສະໝຸດ, ເປັນສູນການຮຽນຮູ້ທີ່ໃຫຍ່ ແລະ ດີທີ່ສຸດຂອງໂລກ; ວິທີການຮຽນ-ການສອນໃນສະຖານການສຶກສາຈະປັບປ່ຽນແນວໃດ, ນັກສຶກສາຮຽນຈົບແລ້ວ ຈຶ່ງສາມາດປະກອບອາຊີບບໍ່? ແລະ ບັນຫາອື່ນໆທີ່ຈະຕ້ອງຄົ້ນຫາ ໂດຍສະເພາະ ປີ 2020 ກັບຄວາມປົກກະຕິຮູບແບບໃໝ່ຫຼັງໂຄວິດ-19 ໂດຍຈະພົບກັບບັນດາການການປ່ຽນແປງໃໝ່ ເປັນທັງກາລະໂອກາດ ແລະ ໄພນາບຂູ່ທີ່ພວກເຮົາບໍ່ຮູ້ຈະເກີດຫຍັງຂຶ້ນໃນອະນາຄົດຢູ່ຕະຫຼາດເງິນ ແລະ ພະຍາດ ໂຄວິດ-19 ຈະສິ້ນສຸດເມື່ອໃດ? ຊຶ່ງມີຫຼາຍໆການຕອບໂຈດທີ່ຈະຄົ້ນຫາ ແຕ່ສິ່ງທີ່ພວກເຮົາເຮັດໄດ້ຄືການກຽມຕົວໃຫ້ພ້ອມຕະຫຼອດເວລາ.

ສຳລັບ; ສທຄ ມີວິໄສທັດແມ່ນ “ພັດທະນາ ສທຄ ໃຫ້ເປັນສະຖາບັນການສຶກສາທີ່ມີຄຸນນະພາບທາງດ້ານການເງິນ-ການທະນາຄານ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ” ແລະ ມີພາລະກິດ “ສທຄ ຈະໃຊ້ວິທະຍາສາດການສຶກສາ ແລະ ເຕັກໂນໂລຊີທີ່ກ້າວໜ້າ ເພື່ອຍົກລະດັບບຸກຄະລາກອນໃຫ້ມີຄຸນນະພາບອອກຮັບໃຊ້ສັງຄົມ” ໂດຍທັນມາສູ່ທັນສະໄໝ ດ້ວຍການພັດທະນາການຮຽນ-ການສອນແບບອອນລາຍເພື່ອໃຫ້ນັກສຶກສາສາມາດຮຽນຮູ້ດ້ວຍຄວາມວ່ອງໄວ, ເຂົ້າໃຈງ່າຍ, ປະຢັດ ແລະ ຫ່າງຫ່າງຈາກການຕິດເຊື້ອພະຍາດຕ່າງໆ ລວມທັງພະຍາດໂຄວິດ-19.



ສຳລັບ ທພລ ທີ່ເປັນທະນາຄານທຸລະກິດ ກໍ່ໄດ້ຮັບການປັບປຸງຕົນເອງຢ່າງຕັ້ງໜ້າ ໂດຍສະເພາະການສະໜອງສິນເຊື່ອເຂົ້າສູ່ພາກ SME ຕາມນະໂຍບາຍລັດຖະບານກໍ່ຄື ທຫລ; ພ້ອມນັ້ນ, ກໍ່ໄດ້ຫັນສູ່ທັນສະໄໝ ດ້ວຍການນຳໃຊ້ຜະລິດຕະພັນ ເອເລັກໂທຣນິກ ແລະ ການບໍລິການແບບໃໝ່ ໂດຍມີການນຳໃຊ້ບັດ UnionPay ໝັ້ນໃຈ ໃຊ້ໄດ້ທົ່ວໂລກ, ບັດພະນັກງານ-ນັກສຶກສາ, ບັດ Credit ຜ່ານລະບົບທີ່ທັນສະໄໝ LapNet ຮ່ວມ 14 ທະນາຄານ, ໂອນເງິນຂ້າມທະນາຄານໂດຍການນຳໃຊ້ LDB Wallet7 ທະນາຄານ, LDB e-Bank ເປັນຜະລິດຕະພັນໃໝ່ສຳລັບບໍລິສັດ ຫຼື ອົງກອນ ໂອນເງິນມູນຄ່າສູງ ສະດວກ ປອດໄພ ແລະ ອື່ນໆ ປຽບເໝືອນມີທະນາຄານຢູ່ໃນມື, ອະນຸມັດທຸລະກຳໄດ້ທຸກທີ່ ທຸກເວລາ ແລະ ນອກນີ້ ທພລ ຍັງມີຫຼາກຫຼາຍຜະລິດຕະພັນທີ່ທັນສະໄໝ, ງ່າຍ, ໄວ, ປອດໄພ ເຂົ້າໃຊ້ບໍລິການ ທພລ “ຊື່ສັດ ໝັ້ນຄົງ ໂປ່ງໃສ ທັນສະໄໝ ຮັບໃຊ້ປະຊາຊົນ”.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**